ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 531 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 30 ມັງກອນ 2020

# ຂໍ້ຕົກລົງ

## ວ່າດ້ວຍ ມາດຕະຖານເຕັກນິກເວັບໄຊຂອງພາກລັດ

- ອີງຕາມ ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ເລກທີ 25/ສພຊ, ລົງວັນທີ 12 ພຶດສະພາ 2017;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ອິນເຕີເນັດ ລະຫັດຊື່ອິນເຕີເນັດຂອງ ສປປ ລາວ ເລກທີ 164/ລບ, ລົງວັນທີ 21 ມີນາ 2012;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານອິນເຕີເນັດເລກທີ 327/ລບ, ລົງວັນທີ 16 ກັນຍາ 2014;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະຖານໃນການຄຸ້ມຄອງ, ຕິດຕາມກວດກາ ຄຸນນະພາບໃນການພັດທະນາເວັບໄຊຂອງພາກລັດ ເພື່ອເປັນບ່ອນອີງ ແລະ ເປັນພື້ນຖານໃຫ້ແກ່ບັນດາອົງການຈັດຕັ້ງພາກລັດໃນການສ້າງ ແລະ ພັດທະນາລະບົບເວັບໄຊຂອງພາກສ່ວນຂອງຕົນໃຫ້ມີປະສິດທິພາບ ແລະ ຮັບປະກັນຄວາມປອດໄພ ແນໃສ່ຊຸກຍູ້ສົ່ງເສີມການພັດທະນາ ແລະ ນຳໃຊ້ລະບົບດັ່ງກ່າວໃຫ້ຖືກຕາມເປົ້າໝາຍ ແລະ ລວມສູນຕາມທິດທາງດຽວກັນ, ປະກອບສ່ວນຊ່ວຍຍົກລະດັບການເຜີຍແຜ່ ແລະ ໃຫ້ບໍລິການຂໍ້ມູນຂ່າວສານຜ່ານທາງເວັບໄຊຂອງພາກລັດ ສູ່ສັງຄົມໃຫ້ກວ້າງຂວາງ ແລະ ກ້າວໄປສູ່ລະດັບມາດຕະຖານສາກົນ.

### ມາດຕາ 2 ມາດຕະຖານເວັບໄຊຂອງພາກລັດ

ມາດຕະຖານເວັບໄຊຂອງພາກລັດ ແມ່ນການກຳນົດຫຼັກການ, ອົງປະກອບເນື້ອໃນ, ຄຸນສົມບັດ, ລັກສະນະ ແລະ ໂຄງສ້າງເວັບໄຊຂອງພາກລັດ ລວມເຖິງແນວທາງການຮັກສາຄວາມປອດໄພຂອງຂໍ້ມູນ ເພື່ອເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດຕາມກວດກາບັນດາເວັບໄຊຂອງພາກລັດ ໃຫ້ເປັນເອກະພາບ, ມີຄວາມທັນສະໄໝ, ຮັບປະກັນຄວາມປອດໄພ ແລະ ສະໜອງຂໍ້ມູນໄດ້ຄົບຖ້ວນ.

ມາດຕາ 3 ການອະທິບາຍສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເວັບໄຊ (Website)** ໝາຍເຖິງ ລະບົບຂໍ້ມູນຂ່າວສານທີ່ຖືກສ້າງຂຶ້ນເປັນໜຶ່ງ ຫຼື ຫຼາຍໜ້າເວັບ ເພື່ອນຳສະເໜີຂໍ້ມູນຜ່ານເຄືອຂ່າຍອິນເຕີເນັດ;

2. **ເວັບໄຊຂອງພາກລັດ** ໝາຍເຖິງ ເວັບໄຊຂອງພາກລັດທີ່ໃຫ້ບໍລິການຂໍ້ມູນຂ່າວສານ ແລະ ການເຮັດທຸລະກຳຕ່າງໆ ແກ່ປະຊາຊົນຜ່ານໜ້າເວັບໄຊ;

3. **ໜ້າເວັບໄຊ (Web Page)** ໝາຍເຖິງ ກະດານຂ່າວເອເລັກໂຕຣນິກໃນຮູບແບບຕົວໜັງສື, ຕົວເລກ, ສັນຍາລັກ, ຮູບພາບເໜັງຕີງ, ຮູບພາບບໍ່ເໜັງຕີງ, ສຽງ, ວິດີໂອ ແລະ ຮູບແບບອື່ນໆ ຜ່ານອິນເຕີເນັດ;

4. **ອິນເຕີເນັດ (Internet)** ໝາຍເຖິງ ລະບົບເຄືອຂ່າຍສື່ສານ ຊຶ່ງສາມາດສົ່ງຂໍ້ມູນຂ່າວສານຫາກັນບໍ່ວ່າຈະເປັນທາງຮູບພາບ, ສຽງ ຫຼື ວິດີໂອ ແລະ ອື່ນໆ ໂດຍຜ່ານທາງສາຍ ຫຼື ທາງອາກາດ;

5. **ແຜນຜັງເວັບໄຊ (Site map)** ໝາຍເຖິງ ແຜນທີ່ຂອງເວັບໄຊທີ່ສະແດງໂຄງສ້າງທັງໝົດຂອງເວັບໄຊ ຊຶ່ງຈະຊ່ວຍໃຫ້ການເຂົ້າຫາຂໍ້ມູນງ່າຍ ແລະ ສະດວກຂຶ້ນ;

6. **ໜ້າກະດານສົນທະນາ (Web board)** ໝາຍເຖິງ ໜ້າກະດານສົນທະນາເອເລັກໂຕຣນິກ ໃນການສົນທະນາແລກປ່ຽນຂໍ້ມູນຂ່າວສານກັນລະຫວ່າງຜູ້ໃຊ້ບໍລິການກັບຜູ້ທີ່ຄຸ້ມຄອງ ແລະ ເຜີຍແຜ່ຂໍ້ມູນ;

7. **ລະຫັດຊື່ອິນເຕີເນັດ (Domain name)** ໝາຍເຖິງ ຊື່ທີ່ໃຊ້ແທນເລກໝາຍຂອງອິນເຕີເນັດ ເພື່ອຈື່ງ່າຍ ແລະ ນຳໃຊ້ງ່າຍ;

8. **ເຊີເວີ (Server)** ໝາຍເຖິງ ລະບົບຄອມພິວເຕີທີ່ມີຄວາມສາມາດສູງໃນການຈັດການວຽກງານ (High Performance) ໂດຍມີການເຊື່ອມຕໍ່ເຄືອຂ່າຍ ແລະ ຕິດຕັ້ງຊອບແວ, ໂປຣແກຣມຕ່າງໆ ຊຶ່ງປະກອບດ້ວຍຖານຂໍ້ມູນເຊີເວີ Database Server, ເວັບເຊີເວີ (Web Server), ເມວເຊີເວີ (Mail Server), ຟາຍເຊີເວີ (File Server) ແລະ ອື່ນໆ;

9. **ຜູ້ໃຫ້ບໍລິການ** ໝາຍເຖິງ ຜູ້ສະໜອງບໍລິການຮັບຝາກເວັບໄຊ ຫຼື ໃຫ້ບໍລິການຂຶ້ນທະບຽນລະຫັດຊື່ອິນເຕີເນັດ;

10. **ຜູ້ໃຊ້ບໍລິການ** ໝາຍເຖິງ ບັນດາອົງການຈັດຕັ້ງລັດທີ່ເປັນເຈົ້າຂອງເວັບໄຊ ຫຼື ເຈົ້າຂອງລະຫັດຊື່ອິນເຕີເນັດ.

ມາດຕາ 4 ຂອບເຂດນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບັນດາອົງການຈັດຕັ້ງພາກລັດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ປະເພດ ແລະ ອົງປະກອບເວັບໄຊຂອງພາກລັດ

ມາດຕາ 5 ປະເພດເວັບໄຊ

ປະເພດເວັບໄຊຂອງພາກລັດແບ່ງອອກເປັນ 06 ປະເພດຫຼັກ ດັ່ງນີ້:

1. **ປະຕູຖານຂໍ້ມູນແຫ່ງຊາດ (e-Portal)** ແມ່ນການບໍລິການຂອງພາກລັດທຸກຂະແໜງການເຂົ້າເປັນລະບົບດຽວ ໂດຍຜ່ານເວັບໄຊປະຕູຖານຂໍ້ມູນແຫ່ງຊາດ (e-Portal) ເພື່ອໃຫ້ບໍລິການດ້ານຂໍ້ມູນຂ່າວສານແກ່ປະຊາຊົນໃຫ້ສາມາດເຂົ້າເຖິງຂໍ້ມູນໄດ້ຢ່າງສະດວກ, ວ່ອງໄວ ແລະ ຮັບປະກັນໄດ້ຄວາມປອດໄພ;

2. **ເວັບໄຊຂໍ້ມູນ (Informational Website)** ແມ່ນເວັບໄຊທີ່ໃຫ້ບໍລິການດ້ານຂໍ້ມູນ ແລະ ບັນດາເອກະສານນິຕິກຳຕ່າງໆ ຂອງອົງການຈັດຕັ້ງພາກລັດ ເພື່ອໃຫ້ບໍລິການດ້ານຂໍ້ມູນແກ່ພາກລັດ, ພາກທຸລະກິດ ແລະ ປະຊາຊົນ;

3. **ເວັບຂ່າວ (News Website)** ແມ່ນເວັບໄຊຂ່າວສານຂອງພາກລັດ ທີ່ໃຫ້ບໍລິການຂ່າວສານແກ່ພາກລັດ, ພາກທຸລະກິດ ແລະ ປະຊາຊົນຜ່ານເວັບໄຊ ຊຶ່ງເປັນການສື່ສານຮູບແບບໜຶ່ງ ເພື່ອນຳສະເໜີຂ່າວສານໃນຮູບແບບເອເລັກໂຕຣນິກ;

4. **ເວັບໄຊການຄ້າເອເລັກໂຕຣນິກ (E-commerce Website)** ແມ່ນເວັບໄຊສຳລັບການຂາຍສິນຄ້າ ແລະ ການບໍລິການທີ່ພາກລັດສ້າງຂຶ້ນ ເພື່ອສົ່ງເສີມການຂາຍໂດຍກົງຜ່ານເຄືອຂ່າຍອິນເຕີເນັດ ໂດຍການສະແດງຮູບຜະລິດຕະພັນສິນຄ້າຜ່ານໜ້າເວັບໄຊ ຊຶ່ງສາມາດຊຳລະເງິນຜ່ານລະບົບອອນລາຍໄດ້ ເຊັ່ນ: ການຂາຍສິນຄ້າກະສິກຳ, ຜະລິດຕະພັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ (ODOP) ແລະ ອື່ນໆ;

5. **ເວັບໄຊການສຶກສາ (Education WebSite)** ແມ່ນເວັບໄຊການສຶກສາພາກລັດທີ່ເຜີຍແຜ່ຂໍ້ມູນເພື່ອການສຶກສາໃຫ້ແກ່ນັກຮຽນ, ນັກສຶກສາ ລວມເຖິງປະຊາຊົນທົ່ວໄປໃນຮູບແບບຫ້ອງສະໝຸດ ຫຼື ແບບອອນລາຍ;

6. **ເວັບໄຊໃຫ້ບໍລິການຜ່ານອິນເຕີເນັດ (e-Service)** ແມ່ນເວັບໄຊທີ່ນຳເອົາບັນດາການບໍລິການແບບເອເລັກໂຕຣນິກຂອງພາກລັດສູ່ປະຊາຊົນ ຊຶ່ງຈະອຳນວຍຄວາມສະດວກໃຫ້ແກ່ປະຊາຊົນດ້ານຕ່າງໆ ເຊັ່ນ: ການເສຍພາສີອາກອນ, ລົງທະບຽນຂໍອະນຸຍາດຕ່າງໆ, ຂໍວີຊ່າ ແລະ ອື່ນໆ.

### ມາດຕາ 6 ອົງປະກອບຫຼັກຂອງເວັບໄຊພາກລັດ

ອົງປະກອບຫຼັກຂອງເວັບໄຊພາກລັດ ມີດັ່ງນີ້:

1. ອົງປະກອບພື້ນຖານ;
2. ອົງປະກອບເສີມ;
3. ອົງປະກອບສະເພາະ.

### ມາດຕາ 7 ອົງປະກອບພື້ນຖານ

ອົງປະກອບພື້ນຖານ ມີ 12 ອົງປະກອບ ດັ່ງນີ້:

1. **ກ່ຽວກັບອົງການຈັດຕັ້ງ:** ແມ່ນຂໍ້ມູນໜຶ່ງທີ່ສຳຄັນໃນການໃຫ້ບໍລິການຂໍ້ມູນຂ່າວສານແກ່ປະຊາຊົນໃນການເຂົ້າເຖິງຂໍ້ມູນໄດ້ ເຊັ່ນ:

- ປະຫວັດຄວາມເປັນມາຂອງອົງການຈັດຕັ້ງ;
- ໂຄງຮ່າງການຈັດຕັ້ງ;
- ທີ່ຕັ້ງ ແລະ ພາລະບົດບາດ;
- ຍຸດທະສາດ ແຜນປະຕິບັດງານ;
- ຂໍ້ມູນການຕິດຕໍ່ປະກອບດ້ວຍ: ທີ່ຢູ່, ເບີໂທລະສັບ, ແຟັກ ແລະ ອີເມວ;
- ລາຍລະອຽດກ່ຽວກັບຜູ້ບໍລິຫານລະດັບສູງ ປະກອບດ້ວຍ: ຊື່-ນາມສະກຸນ ແລະ ຕຳແໜ່ງ;
- ຂໍ້ມູນການຕິດຕໍ່ປະກອບດ້ວຍ: ທີ່ຢູ່, ເບີໂທລະສັບ ແລະ ອີເມວ;
- ຂໍ້ມູນປະຫວັດການເຮັດວຽກຜ່ານມາ.

2. **ນະໂຍບາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບອົງການຈັດຕັ້ງ:** ແມ່ນຂໍ້ມູນກ່ຽວກັບນະໂຍບາຍ, ວິໄສທັດ, ແຜນຍຸດທະສາດ, ແຜນການ 5 ປີ ແລະ ບັນດານິຕິກຳ ເປັນຕົ້ນ ກົດໝາຍ, ດຳລັດ, ຂໍ້ຕົກລົງ, ແຈ້ງການ ຂອງອົງການຈັດຕັ້ງ;

3. **ຂ່າວປະຊາສຳພັນ:** ແມ່ນຂໍ້ມູນທີ່ອົງການຈັດຕັ້ງພາກລັດ ຕ້ອງການເຜີຍແຜ່ຂໍ້ມູນ ໄດ້ແກ່ຂໍ້ມູນທີ່ເປັນເນື້ອໃນທີ່ເປັນໂຕອັກສອນ, ຮູບພາບ, ສັນຍາລັກ ຫຼື ເຄື່ອງໝາຍທີ່ສາມາດສື່ສານ ແລະ ເຂົ້າໃຈໄດ້ ເຊັ່ນ: ຂ່າວການເຄື່ອນໄຫວຂອງຄະນະນຳ, ຂ່າວສານທົ່ວໄປ, ຂ່າວແຈ້ງການຕ່າງໆທີ່ກ່ຽວຂ້ອງກັບວຽກງານຂອງຕົນເອງໃນຂອບເຂດຮັບຜິດຊອບ, ຂ່າວການເຄື່ອນໄຫວກິດຈະກຳວຽກງານຂອງອົງການຈັດຕັ້ງຕົນ;

4. **ເວັບລິ້ງ:** ແມ່ນການເຊື່ອມໂຍງຫາບັນດາເວັບໄຊພາຍໃນອົງການຈັດຕັ້ງພາກລັດ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: ອົງການຈັດຕັ້ງພາຍໃນ, ອົງການຈັດຕັ້ງພາຍນອກທີ່ກ່ຽວຂ້ອງໂດຍກົງ, ເວັບໄຊອື່ນໆ ທີ່ໜ້າສົນໃຈ ແລະ ມີປະໂຫຍດຕໍ່ສັງຄົມ;

5. **ຂໍ້ມູນການບໍລິການຂອງອົງການຈັດຕັ້ງພາກລັດ:** ອົງການຈັດຕັ້ງພາກລັດຕ້ອງສະໜອງ ແລະ ບໍລິການຂໍ້ມູນຂ່າວສານຂອງຕົນສູ່ສັງຄົມ ເພື່ອໃຫ້ບໍລິການຂໍ້ມູນຂ່າວສານ ແລະ ການເຮັດທຸລະກຳຕ່າງໆ ຜ່ານເວັບໄຊ ພ້ອມທັງການອະທິບາຍຂັ້ນຕອນການໃຫ້ບໍລິການຕ່າງໆແກ່ປະຊາຊົນ ເພື່ອສະດວກ ແລະ ງ່າຍຕໍ່ການເຂົ້າເຖິງການບໍລິການຂອງພາກລັດ, ຂໍ້ມູນຕ້ອງຮັບປະກັນຄວາມຖືກຕ້ອງ ແລະ ຄວາມປອດໄພ ໂດຍໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

6. **ຄັງຄວາມຮູ້:** ແມ່ນບັນດາເອກະສານບົດຄວາມ, ບົດຄົ້ນຄວ້າ, ຂໍ້ມູນສະຖິຕິຕ່າງໆ, ບົດຮຽນ ແລະ ຄູ່ມືແນະນຳວິທີການທາງເຕັກນິກວິຊາການ ຫຼື ບົດຄວາມທີ່ມີປະໂຫຍດຕໍ່ສັງຄົມໃນການນຳຂໍ້ມູນໄປໃຊ້ຕໍ່;

7. **ຖາມ-ຕອບ (Q&A):** ແມ່ນສ່ວນທີ່ຜູ້ໃຊ້ບໍລິການສາມາດໃຊ້ສອບຖາມຂໍ້ມູນ ຫຼື ສິ່ງຄຳຄິດເຫັນຫາພາກສ່ວນທີ່ກ່ຽວຂ້ອງ ຊຶ່ງຄຳຖາມທີ່ພົບຫຼາຍ (FAQ) ເປັນສ່ວນທີ່ສະແດງຄຳຖາມ ແລະ ຄຳຕອບທີ່ນິຍົມສອບຖາມຫຼາຍທີ່ສຸດ;

8. **ແຜນຜັງເວັບໄຊ (Site map):** ທຸກເວັບໄຊຂອງພາກລັດຕ້ອງມີແຜນຜັງເວັບໄຊ (Site map) ຊຶ່ງເປັນສ່ວນທີ່ສະແດງແຜນຜັງຂອງເວັບໄຊທັງໝົດ;

9. **ລະບົບຄົ້ນຫາຂໍ້ມູນ (Search):** ເວັບໄຊພາກລັດຕ້ອງມີລະບົບຄົ້ນຫາຂໍ້ມູນ (Search) ເພື່ອໃຫ້ບໍລິການຄົ້ນຫາຂໍ້ມູນພາຍໃນເວັບໄຊໄດ້ສະດວກ ແລະ ວ່ອງໄວ;

10. **ຊ່ອງທາງການຕິດຕໍ່ສື່ສານກັບຜູ້ໃຊ້ບໍລິການ:** ເວັບໄຊພາກລັດຕ້ອງມີຊ່ອງທາງໃນການຕິດຕໍ່ພົວພັນກັນລະຫວ່າງອົງການຈັດຕັ້ງພາກລັດ ແລະ ປະຊາຊົນ ເຊັ່ນ: ທີ່ຢູ່ ແລະ ເບີໂທຕິດຕໍ່, ແຟັກ (Fax), ອີເມວ (e-Mail) ແລະ ເວັບບອດ (Web board);

11. **ການປ່ຽນຮູບແບບພາສາ:** ເວັບໄຊຂອງພາກລັດ ຕ້ອງມີຢ່າງນ້ອຍ 02 ພາສາ ຄື: ພາສາລາວ ແລະ ພາສາອັງກິດ; ການປ່ຽນພາສາ ຕ້ອງມີປຸ່ມປ່ຽນຮູບແບບພາສາຢູ່ດ້ານເທິງທີ່ສາມາດເຫັນໄດ້ງ່າຍ;

12. **ສ່ວນລຸ່ມສຸດຂອງໜ້າເວັບໄຊ (Page Footer):** ທຸກໜ້າຂອງສ່ວນລຸ່ມສຸດຂອງເວັບໄຊ ຕ້ອງສະແດງຂໍ້ມູນຕ່າງໆ ເຊັ່ນ: ກັບຄືນຫາໜ້າຫຼັກ (Home Page) ໃນຮູບແບບຂໍ້ຄວາມ, ຂໍ້ມູນຕິດຕໍ່ເຊັ່ນ: ຊື່, ທີ່ຢູ່, ໝາຍເລກໂທລະສັບ, ແຟັກ ແລະ ທີ່ຢູ່ອີເມວ ແລະ ຄຳສະຫງວນລິຂະສິດ (Copyright).

**ມາດຕາ 8 ອົງປະກອບເສີມ**

ອົງປະກອບເສີມ ແມ່ນອົງປະກອບເພີ່ມເຕີມຂອງເວັບໄຊ ທີ່ເຮັດໃຫ້ເວັບໄຊມີເນື້ອໃນຫຼາກຫຼາຍຂຶ້ນຕື່ມແຕ່ບໍ່ແມ່ນສ່ວນປະກອບທີ່ຈຳເປັນຕ້ອງມີ ເຊັ່ນ: ພະຍາກອນອາກາດ, ເວລາ, ສະຖິຕິເຂົ້າເວັບໄຊ, ຄັງຄວາມຮູ້, ອີເມວ ແລະ ອື່ນໆ.

**ມາດຕາ 9 ອົງປະກອບສະເພາະ**

ອົງປະກອບສະເພາະ ແມ່ນອົງປະກອບທີ່ເປັນວຽກງານສະເພາະຂອງແຕ່ລະຂະແໜງການ ເພື່ອການບໍລິຫານ ແລະ ບໍລິການ ເປັນຕົ້ນ:

1. **ຂໍ້ມູນການບໍລິການ:** ການສະແດງຂໍ້ມູນການໃຫ້ບໍລິການພ້ອມການອະທິບາຍຂັ້ນຕອນການໃຫ້ບໍລິການຕ່າງໆໃຫ້ແກ່ປະຊາຊົນ ເພື່ອສະດວກ ແລະ ງ່າຍຕໍ່ການນຳໃຊ້ການບໍລິການຂອງພາກລັດ;

2. **ແບບຟອມທີ່ດາວໂຫຼດໄດ້ (Download Forms):** ແບບຟອມທີ່ໃຫ້ບໍລິການປະຊາຊົນສຳຫຼັບດາວໂຫຼດແບບຟອມຕ່າງໆ ຂອງອົງການຈັດຕັ້ງທີ່ເຜີຍແຜ່ໃຫ້ບໍລິການແກ່ປະຊາຊົນ;

3. **ລະບົບໃຫ້ບໍລິການໃນຮູບແບບເອເລັກໂຕຣນິກ (e-Service)** ແມ່ນລະບົບທີ່ໃຫ້ບໍລິການໃນຮູບແບບເອເລັກໂຕຣນິກ ເຊັ່ນ:

- ການລົງທະບຽນອອນລາຍ (Register Online): ແມ່ນສ່ວນທີ່ເປັນແບບຟອມສຳຫຼັບບັນທຶກຊື່ ຫຼື ຂໍ້ມູນຜູ້ໃຊ້ບໍລິການໃນການລົງທະບຽນ ເຊັ່ນ: ການລົງທະບຽນເຂົ້າຮ່ວມກອງປະຊຸມ ຫຼື ເຂົ້າຮ່ວມກອງປະຊຸມສຳມະນາ.
- ຮູບແບບຟອມເອເລັກໂຕຣນິກ ແລະ ແບບຟອມອອນລາຍ (E-Forms / Online Forms) ແມ່ນສ່ວນທີ່ໃຫ້ບໍລິການບັນທຶກຂໍ້ມູນລົງໃນແບບຟອມຕ່າງໆໃນໜ້າເວັບໄຊ ໂດຍບໍ່ຕ້ອງດາວໂຫຼດເອກະສານ ແລະ ສາມາດພິມເອກະສານ ຫຼື ບັນທຶກຂໍ້ມູນເກັບໄວ້ໃນຮູບແບບຟາຍເອເລັກໂຕຣນິກໄດ້.

## ໝວດທີ 3
## ການຂຶ້ນທະບຽນເວັບໄຊພາກລັດ

**ມາດຕາ 10 ການກຳນົດຊື່ເວັບໄຊພາກລັດ**

ການກຳນົດຊື່ເວັບໄຊຂອງພາກລັດ ແມ່ນແຕ່ລະອົງການຈັດຕັ້ງລັດກຳນົດຊື່ຂອງອົງການຈັດຕັ້ງຕົນເອງ ໂດຍອີງໃສ່ຊື່ ຫຼື ຊື່ຫຍໍ້ຂອງອົງການຈັດຕັ້ງຕົນ ແລະ ສະເໜີຈົດທະບຽນຂຶ້ນລະຫັດຊື່ນຳສູນອິນເຕີເນັດແຫ່ງຊາດ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 11 ການຕັ້ງລະຫັດຊື່ອິນເຕີເນັດ (Domain name)**

ການຕັ້ງລະຫັດຊື່ອິນເຕີເນັດ (Domain name) ປະຕິບັດຕາມຫຼັກການ ດັ່ງນີ້:

- ລະຫັດຊື່ອິນເຕີເນັດ (Domain name) ຕ້ອງມີຕົວອັກສອນພາສາອັງກິດ ('a' ຫາ 'z') ຫຼື ຕົວເລກ ('0' ຫາ '9') ຊຶ່ງລະຫັດຊື່ດັ່ງກ່າວ ຕ້ອງມີຢ່າງໜ່ອຍ 2 ຕົວອັກສອນ, ແຕ່ບໍ່ໃຫ້ເກີນ 63 ຕົວອັກສອນ;

- ລະຫັດຊື່ອິນເຕີເນັດ (Domain name) ຕ້ອງບໍ່ມີສ່ວນປະກອບຂອງຄໍາສັບທີ່ສະຫງວນ ແລະ ຄໍາສະເພາະເປັນຕົ້ນ: @!#$%^&*()_+=;

- ການຕັ້ງລະຫັດຊື່ອິນເຕີເນັດ ແມ່ນບໍ່ໃຫ້ມີການຍະຫວ່າງລະຫວ່າງຕົວອັກສອນຂອງລະຫັດຊື່.

**ມາດຕາ 12 ການຈົດທະບຽນລະຫັດຊື່ອິນເຕີເນັດ (Domain name)**

ການຈົດທະບຽນລະຫັດຊື່ອິນເຕີເນັດ (Domain name) ຕ້ອງຈົດທະບຽນຊື່ໂດເມນພາຍໃນປະເທດທີ່ເປັນລະຫັດຊື່ໂດເມນຂອງພາກລັດ ".gov.la" ເທົ່ານັ້ນ ແລະ ຕ້ອງສະເໜີຂຶ້ນທະບຽນລະຫັດຊື່ອິນເຕີເນັດນໍາສູນອິນເຕີເນັດແຫ່ງຊາດ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຊຶ່ງຂໍ້ມູນລະຫັດຊື່ດັ່ງກ່າວ ໄດ້ເກັບໄວ້ໃນເຊີເວີຂອງສູນຂໍ້ມູນແຫ່ງຊາດ (National Data Center) ຂອງສູນອິນເຕີເນັດແຫ່ງຊາດ.

**ມາດຕາ 13 ການເກັບຮັກສາຂໍ້ມູນ ແລະ ການເກັບຮັກສາເວັບໄຊ ຫຼື ເວັບໂຮດຕິ້ງ (Web Hosting)**

ບັນດາອົງການຈັດຕັ້ງພາກລັດທີ່ມີສູນຂໍ້ມູນຂ່າວສານ (Data Center) ເປັນຂອງຕົນເອງ ສາມາດເກັບຮັກສາຂໍ້ມູນເວັບໄຊໄວ້ໃນສູນຂອງຕົນເອງ ແລະ ຕ້ອງໄດ້ສໍາຮອງຂໍ້ມູນເວັບໄຊໄວ້ໃນສູນຂໍ້ມູນຂ່າວສານແຫ່ງຊາດ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ໝວດທີ 4
## ມາດຕະຖານເຕັກນິກເວັບໄຊຂອງພາກລັດ

**ມາດຕາ 14 ມາດຕະຖານເວັບໄຊຂອງພາກລັດ (Government Web Platform)**

ມາດຕະຖານເວັບໄຊຂອງພາກລັດ (Government Web Platform ຫຼື G-Web) ແມ່ນການພັດທະນາລະບົບເວັບໄຊຂອງພາກລັດ ແລະ ສ້າງເປັນລະບົບໂຕແບບໃຫ້ແກ່ການພັດທະນາເວັບໄຊຂອງບັນດາກະຊວງ ແລະ ຫ້ອງການລັດຕ່າງໆ ເພື່ອໃຫ້ເປັນມາດຕະຖານດຽວກັນ ແລະ ຮັບປະກັນຄວາມປອດໄພ ແນໃສ່ການເຜີຍແຜ່, ປະຊາສໍາພັນ ແລະ ບໍລິການຂໍ້ມູນຂ່າວສານຜ່ານທາງເວັບໄຊ ໃຫ້ແກ່ປະຊາຊົນ, ພາກທຸລະກິດ ແລະ ພາກລັດດ້ວຍກັນໃຫ້ມີປະສິດທິພາບສູງ.

ມາດຕະຖານເວັບໄຊຂອງພາກລັດ (G-Web) ມີດັ່ງນີ້:

| ລ/ດ | ປະເພດມາດຕະຖານ | ສັນຍາລັກ | ຊື່ເຕັມ | ພັນທະ |
|---|---|---|---|---|
| 1 | ມາດຕະຖານເວັບໄຊຂອງພາກລັດ (G-Web) | | | |
| | | G-Web Platform | ເວັບໄຊຂອງລັດຖະບານ (G-Web Platform) ເປັນໂປຣແກຣມທີ່ຊ່ວຍໃນການສ້າງ ແລະ ຄຸ້ມຄອງເວັບໄຊ ຊຶ່ງຈະອໍານວຍຄວາມສະດວກໃນ | ແນະນໍາໃຫ້ໃຊ້ |

| | | | | |
|---|---|---|---|---|
| | | | ການບໍລິຫານຈັດການກັບເນື້ອໃນຂອງເວັບໄຊ ໃຫ້ເປັນລະບົບ ແລະ ງ່າຍຂຶ້ນ. ໃນການຕິດຕັ້ງ G-Web Platform ຈະມີອົງປະກອບຄື: PHP Version 7.x, Yii Framework 2.x, Bootstrap 3.x, HTML, JavaScript + jQuery, MySQL Version >= 5.6, Apache 2.x, OS Linux or Windows. | |

ມາດຕາ 15 ມາດຕະຖານໂປຣແກຣມຖານຂໍ້ມູນຂອງເວັບໄຊພາກລັດ

ໂປຣແກຣມຖານຂໍ້ມູນຂອງເວັບໄຊ ແມ່ນໂປຣແກຣມ ຫຼື ຊອບແວທີ່ຊ່ວຍໃນການບໍລິຫານ ແລະ ຈັດການຂໍ້ມູນທີ່ຢູ່ໃນຖານຂໍ້ມູນບໍ່ວ່າຈະເປັນການເກັບຮັກສາຂໍ້ມູນ, ການດຶງຂໍ້ມູນມານຳໃຊ້ ແລະ ການປັບປຸງຂໍ້ມູນ.

ມາດຕະຖານໂປຣແກຣມຖານຂໍ້ມູນເວັບໄຊຂອງພາກລັດ ມີດັ່ງນີ້:

| ລ/ດ | ໂປແກຣມຖານຂໍ້ມູນ | ອະທິບາຍໂດຍຫຍໍ້ | ພັນບັງຄັບ |
|---|---|---|---|
| 1 | MySQL | MySQL ເປັນໂປຣແກຣມຈັດການຖານຂໍ້ມູນ ເຊີງສຳພັນ (Relational Database Management System) ທີ່ໃຊ້ຄຳສັ່ງ SQL ແລະ ເປັນລະບົບຖານຂໍ້ມູນເປີດ (Open Source) ທີ່ສະໜັບສະໜູນພາສາ PHP, JAVA, Perl, Python, C/C++F Ruby. | ແນະນຳໃຫ້ໃຊ້ |
| 2 | PostgreSQL | PostgreSQL ເປັນໂປຣແກຣມຈັດການຖານຂໍ້ມູນໃນຮູບແບບວັດຖຸເຊີງສຳພັນ ORDBMS (Object Relational Database Management System) ຊຶ່ງໃຊ້ຄຳສັ່ງ SQL ແລະ ເປັນລະບົບຖານຂໍ້ມູນເປີດ (Open Source) ສາມາດເຮັດວຽກໄດ້ເທິງລະບົບປະຕິບັດການ Linux, UNIX (AIX, BSD, HP-UX, SGI Irix, Mac OS X, Solaris, Tru64) ແລະ Windows. | ສາມາດໃຊ້ໄດ້ ແຕ່ຕ້ອງແຈ້ງລາຍລະອຽດ |
| 3 | Oracle | Oracle ເປັນໂປຣແກຣມເຊີງສຳພັນ (Relational Database Management System) Oracle ມີຢູ່ 2 ປະເພດຄື: Personal Oracle ແລະ Oracle Server. | ສາມາດໃຊ້ໄດ້ ແຕ່ຕ້ອງແຈ້ງລາຍລະອຽດ |
| 4 | SQL Server | SQL server ຫຼື Microsoft SQL Server ເປັນໂປຣ | ສາມາດໃຊ້ໄດ້ ແຕ່ຕ້ອງແຈ້ງ |

| | | | |
|---|---|---|---|
| | | ແກຣມຈັດການຖານຂໍ້ມູນເຊີງສຳພັນ (Relational Database Management System ຫຼື RDBMS) ຊຶ່ງເປັນຜະລິດຕະພັນ ທີ່ບໍລິສັດ Microsoft ເປັນຜູ້ຜະລິດ ຊຶ່ງພາສາ T-SQL ເປັນໂຕຈັດການຂໍ້ມູນ. | ລາຍລະອຽດ |
| 5 | IBM DB2 | ເປັນໂປຣແກຣມຈັດການຖານຂໍ້ມູນເຊີງສຳພັນ (Relational Database Management System) ສາມາດເຮັດວຽກໄດ້ເທິງລະບົບປະຕິບັດການ Linux, UNIX ແລະ Windows. | ສາມາດໃຊ້ໄດ້ ແຕ່ຕ້ອງແຈ້ງ ລາຍລະອຽດ |

**ມາດຕາ 16 ມາດຕະຖານພາສາໃນການພັດທະນາເວັບໄຊ.**

ພາສາໃນການພັດທະນາເວັບໄຊ ແມ່ນພາສາທີ່ໃຊ້ໃນການພັດທະນາເວັບໄຊສຳລັບສ້າງໜ້າເວັບ (Webpage) ເພື່ອສະແດງຜົນຂໍ້ມູນຢູ່ເທິງໜ້າເວັບໄຊ ແລະ ຈັດການເຊື່ອມຕໍ່ບັນດາຂໍ້ມູນຕ່າງໆເຂົ້າຫາກັນ.

ມາດຕະຖານພາສາໃນການພັດທະນາເວັບໄຊຂອງພາກລັດ ມີດັ່ງນີ້:

| ລ/ດ | ປະເພດມາດຕະຖານ | ສັນຍາລັກ | ຊື່ເຕັມ | ຜົນບັງຄັບ |
|---|---|---|---|---|
| 1 | ພາສາເວັບໄຊ | HTML v4.01 | Hypertext Markup Language version 4.01 | ແນະນຳໃຫ້ໃຊ້ |
| | | HTML 5 | Hypertext Markup Language version 5 | ແນະນຳໃຫ້ໃຊ້ |
| | | PHP | PHP:Hypertext Preprocessor ແຕ່ກ່ອນເອີ້ນວ່າ Personal Home Page ເປັນພາສາທີ່ສຳຄັນທີ່ຊ່ວຍໃຫ້ພວກເຮົາສາມາດສ້າງໜ້າເວັບໄຊແບບເຄື່ອນໄຫວ ຫຼື ໜ້າເວັບໄຊທີ່ມີການຕອບໂຕ້ກັບຜູ້ໃຊ້ງານ (Dynamic Web pages). | ແນະນຳໃຫ້ໃຊ້ |
| | | ASP<br>ASP.NET | Active Server Pages ເປັນພາສາທີ່ໃຊ້ Syntax ຂອງພາສາ VBscript, C# ຫຼື Visual Basic. | ສາມາດໃຊ້ໄດ້ ແຕ່ຕ້ອງແຈ້ງ ລາຍລະອຽດ |
| | | JSP | Java Server Pages ເປັນພາສາໃຊ້ສຳລັບການພັດທະນາ Application ເທິງເວັບໄຊ ຊຶ່ງເອີ້ນວ່າເວັບແອັບພິເຄເຊິນ (Web Application). | ສາມາດໃຊ້ໄດ້ ແຕ່ຕ້ອງແຈ້ງ ລາຍລະອຽດ |

| | | | | |
|---|---|---|---|---|
| | | CSS | Cascading Style Sheets ເປັນພາສາທີ່ໃຊ້ໃນການຈັດຮູບແບບການສະແດງຜົນ ແລະ ຕົກແຕ່ງເວັບໄຊ. | ສາມາດໃຊ້ໄດ້ແຕ່ຕ້ອງແຈ້ງລາຍລະອຽດ |
| | | JAVA | ເປັນພາສາທີ່ສຳຄັນທີ່ຊ່ວຍໃຫ້ພວກເຮົາສາມາດສ້າງໂປຣແກຣມ ແລະ ເວັບໄຊແບບເຄື່ອນໄຫວ ຫຼື ໜ້າເວັບໄຊທີ່ມີການຕອບໂຕ້ກັບຜູ້ໃຊ້ງານໄດ້ດີ. | ແນະນຳໃຫ້ໃຊ້ |

ມາດຕາ 17 ມາດຕະຖານສະແດງຂໍ້ມູນ

ການສະແດງຂໍ້ມູນ ແມ່ນຮູບແບບການສະແດງຜົນຂໍ້ມູນເທິງເວັບໄຊ ເພື່ອໃຫ້ສາມາດເຂົ້າໃຈໄດ້ງ່າຍໂດຍຜ່ານຮູບແບບຕົວອັກສອນ, ບັນດາປະເພດເອກະສານຕ່າງໆ, ຮູບພາບ, ສຽງ, ວິດີໂອ ແລະ ອື່ນໆ.

ມາດຕະຖານພາສາໃນການພັດທະນາເວັບໄຊຂອງພາກລັດ ມີດັ່ງນີ້:

| ລ/ດ | ປະເພດມາດຕະຖານ | ສັນຍາລັກ | ຊື່ເຕັມ | ພັນທະ |
|---|---|---|---|---|
| 1 | ຮູບແບບພາສາລາວໃນການສະແດງຂໍ້ມູນ | | | |
| | | Phetsarath_OT.ttf | ຕົວອັກສອນພາສາລາວທີ່ໃຊ້ສະແດງຜົນໃນໜ້າເວັບໄຊແມ່ນນຳໃຊ້ຟອນ PhetsarathOT ຂະໜາດຂອງຕົວອັກສອນແມ່ນ 12pt ຫຼື 16px, ຊຶ່ງຂໍ້ຄວາມສາມາດຂະຫຍາຍໄດ້ເຖິງ 200%. | ບັງຄັບໃຊ້ |
| 2 | ຮູບແບບເອກະສານຂຶ້ນເວັບໄຊ | | | |
| | | (.doc)<br>(.docx) | ຮູບແບບເອກະສານ word ຂອງ Microsoft. | ແນະນຳໃຫ້ໃຊ້ |
| | | CSV | Comma-Separated Values ເປັນຟາຍຂໍ້ຄວາມ (Text File) ໃຊ້ສຳລັບເກັບຂໍ້ມູນໃນຮູບແບບຕາຕະລາງໂດຍໃຊ້ເຄື່ອງໝາຍຈຸດ (,) ໃນການແບ່ງແຕ່ລະຖັນ (Column) ແລະ ໃຊ້ການຍະຫວ່າງແທນການແບ່ງແຖວ(Row). | ແນະນຳໃຫ້ໃຊ້ |
| | | (PDF) | (Portable Document Format) ເປັນຮູບແບບເອກະສານໃນຮູບແບບ Adobe Acrobat ສາມາດເປີດຜ່ານເວັບບາວເຊີໄດ້. | ແນະນຳໃຫ້ໃຊ້ |
| 3 | ຮູບແບບຕາຕະລາງຂຶ້ນເວັບໄຊ | | | |
| | | (.xlsx)<br>(.xls) | ຮູບແບບເອກະສານຕາຕະລາງ excel ຂອງ Microsoft. | ແນະນຳໃຫ້ໃຊ້ |

| | | | | |
|---|---|---|---|---|
| 4 | ຮູບພາບ | | | |
| | | JPEG | Joint Photographic Expert Group ສາມາດສະແດງຜົນໄດ້ຮອດ 16 ລ້ານສີ ພາບຈະມີຄວາມຊັດແຈ້ງດີ. | ແນະນຳໃຫ້ໃຊ້ |
| | | PNG | Portable Network Graphics ສາມາດຮອງຮັບການສະແດງຜົນຂອງສີໄດ້ຫຼາຍກ່ວາ 64 bit. | ແນະນຳໃຫ້ໃຊ້ |
| | | GIF | Graphic Interchange Format GIF ເປັນຮູບແບບຟາຍຮູບພາບ ແລະ ຟາຍພາບເຄື່ອນໄຫວ, ຮູບແບບ GIF ຖືກອອກແບບໂດຍ Compuserve, ຊຶ່ງເປັນລະບົບເຄືອຂ່າຍຂ່າວສານອອນລາຍໃນຮູບແບບພາບນິ່ງ ຫຼື ຮູບພາບເຄື່ອນໄຫວ. | ແນະນຳໃຫ້ໃຊ້ |
| 5 | ວິດີໂອ | | | |
| | | .MP4 | ເປັນຮູບແບບການສະແດງຟາຍວິດີໂອ ຊຶ່ງປະກອບມີທັງຮູບພາບ ແລະ ສຽງ ຊຶ່ງມີຂະໜາດນ້ອຍ ແລະ ມີປະສິດທິພາບ. | ແນະນຳໃຫ້ໃຊ້ |
| | | .3GP | Third Generation Platform ເປັນຮູບແບບການສະແດງຟາຍວິດີໂອ ຊຶ່ງປະກອບມີທັງຮູບພາບ ແລະ ສຽງ. ເປັນຟາຍທີ່ມີຂະໜາດນ້ອຍ ແລະ ໃຊ້ເນື້ອທີ່ໃນການຈັດເກັບບໍ່ຫຼາຍ. | ແນະນຳໃຫ້ໃຊ້ |
| | | .wav | Windows Media Audio/Video ເປັນຮູບແບບການສະແດງຟາຍວິດີໂອ ຊຶ່ງປະກອບມີທັງຮູບພາບ ແລະ ສຽງທີ່ພັດທະນາໂດຍ Microsoft Windows. | ແນະນຳໃຫ້ໃຊ້ |
| | | .avi | Avi (Audio Video Interleave) ເປັນຮູບແບບການສະແດງຟາຍວິດີໂອ ຊຶ່ງຖືກບີບອັດເປັນຟາຍຂະໜາດນ້ອຍໂດຍບໍ່ເສຍຄຸນນະພາບຂອງວິດີໂອ. | ແນະນຳໃຫ້ໃຊ້ |

# ໝວດທີ 5
# ການຮັກສາຄວາມປອດໄພເວັບໄຊຂອງພາກລັດ

**ມາດຕາ 18 ການຮັກສາຄວາມປອດໄພຂອງເວັບໄຊ**

ການຮັກສາຄວາມປອດໄພເວັບໄຊ (Website Security) ເປັນສິ່ງທີ່ສຳຄັນທີ່ສຸດໃນການຮັກສາຄວາມປອດໄພ ແລະ ໝັ້ນຄົງຂອງຂໍ້ມູນໃນເວັບໄຊ ເພື່ອໃຫ້ຜູ້ໃຊ້ບໍລິການເວັບໄຊມີຄວາມໝັ້ນໃຈ ແລະ ເຊື່ອໝັ້ນ ໃນການເຮັດທຸລະກຳທາງເອເລັກໂຕຣນິກເທິງເວັບໄຊ. ໃນການໃຫ້ບໍລິການ ຕ້ອງເຮັດໃຫ້ຜູ້ໃຊ້ບໍລິການແນ່ໃຈວ່າຂໍ້ມູນຂອງຜູ້ໃຊ້ບໍລິການຈະໄດ້ຮັບການຄຸ້ມຄອງເປັນຢ່າງດີ ແລະ ມີຄວາມປອດໄພສູງສຸດ.

ການຮັກສາຄວາມປອດໄພຂອງເວັບໄຊ ມີ ດັ່ງນີ້:

1. ການຮັກສາຄວາມປອດໄພຮາດແວ ແລະ ລະບົບເຄືອຂ່າຍ;
2. ການຮັກສາຄວາມປອດໄພດ້ານຂໍ້ມູນ.

**ມາດຕາ 19 ການຮັກສາຄວາມປອດໄພຮາດແວ ແລະ ລະບົບເຄືອຂ່າຍ**

ການຮັກສາຄວາມປອດໄພຮາດແວ ແລະ ລະບົບເຄືອຂ່າຍ ໃຫ້ປະຕິບັດ ດັ່ງນີ້:

1. ມີລະບົບປ້ອງກັນທາງດ້ານລະບົບເຄືອຂ່າຍເຊັ່ນ: ລະບົບ Network Monitoring ລະບົບຝາຍວໍ (Firewall), (D-Dos Protection “Distributed Denial-of-Service”) ໃນການຄຸ້ມຄອງ ແລະ ກຳນົດສິດໃນການເຂົ້າເຖິງຂໍ້ມູນຈາກພາຍນອກເຂົ້າມາໃນເຄືອຂ່າຍຂອງເຮົາ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ທຳລາຍເວັບໄຊໃຫ້ມີການເສຍຫາຍ ລະບົບຈະເຮັດໜ້າທີ່ໃນການປ້ອງກັນການໂຈມຕີລະບົບເຄືອຂ່າຍ;

2. ມີລະບົບກວດສອບ ເພື່ອຕິດຕາມ, ຈັດເກັບ ແລະ ຮັບສິ່ງຂໍ້ມູນ, ກວດສອບໄວຣັດ ແລະ ດັກຈັບຂໍ້ມູນຂອງຜູ້ທີ່ພະຍາຍາມລັກລອບເຂົ້າມາໃນລະບົບໂດຍບໍ່ໄດ້ຮັບອະນຸຍາດເຊັ່ນ: Intrusion Detection System; Anti-Virus, Log file serve, Secured Socket Layer (SSL), Hypertext Transfer Protocol (HTTPs) ແລະ ອື່ນໆ.

**ມາດຕາ 20 ການຮັກສາຄວາມປອດໄພດ້ານຂໍ້ມູນ**

ການຮັກສາຄວາມປອດໄພດ້ານຂໍ້ມູນ ໃຫ້ປະຕິບັດ ດັ່ງນີ້:

1. ມີລະບົບຄວບຄຸມການເຂົ້າເຖິງຂໍ້ມູນ (Access Control) ເພື່ອກຳນົດສິດໃນການເຂົ້ານຳໃຊ້, ແກ້ໄຂ ແລະ ລຶບຂໍ້ມູນຕ່າງໆ;

2. ມີລະບົບການຢັ້ງຢືນຕົວຕົນໃນການເຂົ້າໃຊ້ຂໍ້ມູນ (Authorized) ເພື່ອພິສູດຕົວຕົນວ່າບຸກຄົນດັ່ງກ່າວມີຕົວຕົນທີ່ແທ້ຈິງ ຈຶ່ງສາມາດເຂົ້າໄປນຳໃຊ້ຂໍ້ມູນໄດ້ ຊຶ່ງການຢັ້ງຢືນຕົວຕົນປະກອບດ້ວຍການກຳນົດຊື່ ແລະ ລະຫັດຜ່ານໃນການເຂົ້າລະບົບ ຫຼື ການໃຊ້ Physiological Biometrics;

3. ມີລະບົບການເຂົ້າລະຫັດຂໍ້ມູນ (Data Encryption) ໃນການຮັກສາຄວາມປອດໄພຂອງຂໍ້ມູນ (Data Security Solutions) ຊຶ່ງປ້ອງກັນການເຂົ້າເຖິງຂໍ້ມູນດ້ວຍການເຂົ້າລະຫັດ (Encryption) ທີ່ເຮັດໃຫ້ຂໍ້ມູນນັ້ນເປັນຄວາມລັບ ແລະ ຜູ້ທີ່ມີສິດເທົ່ານັ້ນ ຈຶ່ງສາມາດອ່ານຂໍ້ມູນນັ້ນໄດ້ໂດຍການຖອດລະຫັດ (Encryption) ແລະເຮັດໃຫ້ຂໍ້ມູນນັ້ນກັບມາໃນຮູບແບບທີ່ສາມາດໃຊ້ງານໄດ້;

4. ມີລະບົບການກວດສອບຂໍ້ມູນ (Input Validation) ໃນການກັ່ນຕອງຂໍ້ມູນ ກ່ອນທີ່ຈະນຳເອົາຂໍ້ມູນເຂົ້າໄປຈັດເກັບຄວາມຖືກຕ້ອງສົມບູນ ແລະ ດັກຈັບເອົາການປ້ອນຂໍ້ມູນ ເພື່ອເຂົ້າໄປທຳລາຍຂໍ້ມູນໃນລະບົບ ໃນຮູບແບບຕ່າງໆ ເຊັ່ນ: SQL injection, Cross site Scripting , Cross Site Script Forgery ແລະ ອື່ນໆ;

5. ມີລະບົບການສຳຮອງຂໍ້ມູນ (Data Backup) ໃນການສຳຮອງຂໍ້ມູນເນື້ອໃນຂອງເວັບໄຊ ເພື່ອປ້ອງກັນກໍລະນີການເສຍຫາຍຂອງຂໍ້ມູນ ບໍ່ວ່າຈະຕັ້ງໃຈລຶບ ຫຼື ບໍ່ຕັ້ງໃຈ, ພວກເຮົາກໍ່ສາມາດກູ້ຂໍ້ມູນຄືນໄດ້ຈາກຂໍ້ມູນທີ່ພວກເຮົາສຳຮອງໄວ້ຈາກອຸປະກອນເກັບຮັກສາຂໍ້ມູນອື່ນແທນໄດ້.

**ມາດຕາ 21 ການເຊື່ອມໂຍງຂໍ້ມູນເວັບໄຊລະຫວ່າງອົງການຈັດຕັ້ງພາກລັດ.**

ການເຊື່ອມໂຍງຂໍ້ມູນເວັບໄຊລະຫວ່າງອົງການຈັດຕັ້ງພາກລັດ ປະຕິບັດ ດັ່ງນີ້:

1. ອົງການຈັດຕັ້ງພາກລັດທີ່ມີເວັບໄຊເປັນຂອງຕົນເອງ ແມ່ນສາມາດເພີ່ມລິ້ງ (Link) ເພື່ອເຊື່ອມໂຍງຫາເວັບໄຊອື່ນໆ ຂອງພາກລັດດ້ວຍກັນໄດ້ເລີຍ ສ່ວນອົງການຈັດຕັ້ງພາກລັດໃດທີ່ຕ້ອງການຈະເພີ່ມລິ້ງ (Link) ເຊື່ອມໂຍງຫາເວັບໄຊເອກະຊົນທັງພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ກວດສອບແຫຼ່ງທີ່ມາຂອງເວັບໄຊດັ່ງກ່າວໃຫ້ຖືກຕ້ອງ ແລະ ສາມາດຢັ້ງຢືນຕົວຕົນໄດ້ ກ່ອນທີ່ຈະມີການເພີ່ມລິ້ງ (Link) ເຂົ້າໃນເວັບໄຊ ເພື່ອຮັບປະກັນຄວາມປອດໄພ;

2. ທຸກການບໍລິການຂອງເວັບໄຊຕ້ອງແຈ້ງຫາ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອເອົາເຂົ້າໃນລະບົບປະຕູຖານຂໍ້ມູນແຫ່ງຊາດ (e-Portal) ເພື່ອສ້າງຄວາມສະດວກໃນການໃຫ້ບໍລິການແກ່ປະຊາຊົນໃຫ້ສາມາດເຂົ້າເຖິງແຫຼ່ງຂໍ້ມູນ ແລະ ການບໍລິການພາກລັດໃຫ້ທົ່ວເຖິງ ໂດຍການເຂົ້າຜ່ານປະຕູຖານຂໍ້ມູນແຫ່ງຊາດ;

3. ບັນດາອົງການຈັດຕັ້ງພາກລັດ ທີ່ຕ້ອງການເຊື່ອມໂຍງຂໍ້ມູນຫາອົງການຈັດຕັ້ງພາກລັດອື່ນ ໃຫ້ເຊື່ອມຕໍ່ຜ່ານລະບົບປະຕູຖານຂໍ້ມູນແຫ່ງຊາດ (e-Portal) ທີ່ເປັນລະບົບສູນກາງຂໍ້ມູນ ເພື່ອໃຫ້ບໍລິການປະຊາຊົນຜ່ານລະບົບປະຕູດຽວ.

## ໝວດທີ 6
## ສິດ ແລະ ພັນທະ

**ມາດຕາ 22 ສິດ ແລະ ພັນທະຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການຮັບຝາກເວັບໄຊຂອງພາກລັດ ມີສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ຄຳແນະນຳ ແລະ ຄຳປຶກສາໃນການພັດທະນາເວັບໄຊຂອງອົງການຈັດຕັ້ງລັດ;

2. ປະສານສົມທົບ, ຮ່ວມມືກັບຜູ້ໃຊ້ບໍລິການທາງດ້ານວິຊາການ ແລະ ເຕັກນິກໃນການຄົ້ນຄວ້າ ແລະ ພັດທະນາເວັບໄຊ;

3. ຄຸ້ມຄອງ, ໃຫ້ບໍລິການຮັບຝາກເວັບໄຊ ແລະ ໃຫ້ບໍລິການພື້ນທີ່ໃນການຝາກເວັບໄຊ (Web Hosting);

4. ຮັບປະກັນຄຸນນະພາບ ແລະ ມາດຕະຖານຂອງເຄື່ອງເຊີເວີ, ໂປຣແກຣມ ແລະ ລະບົບເຄືອຂ່າຍ ກ່ອນຈະມີການໃຫ້ບໍລິການຮັບຝາກເວັບໄຊ ໃນແຕ່ລະຄັ້ງ ເພື່ອຮັບປະກັນຄວາມປອດໄພ;

5. ຄຸ້ມຄອງ, ເກັບຮັກສາຂໍ້ມູນ ແລະ ຖານຂໍ້ມູນເວັບໄຊ;

6. ໂຈະ ຫຼື ລະງັບການໃຫ້ບໍລິການຝາກເວັບໄຊຂອງຜູ້ໃຊ້ບໍລິການ ທີ່ເປັນອັນຕະລາຍຕໍ່ສັງຄົມ ຫຼື ຜິດຕໍ່ກົດໝາຍ ແລະ ລະບຽບການ;

7. ຍົກເລີກການໃຫ້ບໍລິການ ເມື່ອຜູ້ໃຊ້ບໍລິການບໍ່ຈ່າຍຄ່າທຳນຽມລະຫັດຊື່ອິນເຕີເນັດ ແລະ ຄ່າບໍລິການຝາກເວັບໄຊຕາມທີ່ໄດ້ກຳນົດໄວ້;

8. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີສິດ ແລະ ພັນທະ ດັ່ງນີ້:

1. ຕ້ອງປະກອບຂໍ້ມູນໃນການຂໍຈົດທະບຽນລະຫັດຊື່ອິນເຕີເນັດ ເປັນຂໍ້ມູນທີ່ຖືກຕ້ອງເປັນຈິງເຊັ່ນ: ລະຫັດຊື່ອິນເຕີເນັດທີ່ຕ້ອງການຂຶ້ນທະບຽນ, ຂໍ້ມູນຜູ້ຄຸ້ມຄອງລະຫັດຊື່ອິນເຕີເນັດ, ປະເພດການບໍລິການ ແລະ ຂໍ້ມູນຕິດຕໍ່ພົວພັນລະອຽດ;

2. ຕ້ອງປະກອບຂໍ້ມູນໃນການຂໍນຳໃຊ້ບໍລິການລະຫັດຊື່ອິນເຕີເນັດຂອງອົງການຈັດຕັ້ງຕົນ ເຊັ່ນ: ຊື່ອົງການຈັດຕັ້ງ, ເບີໂທ, ອີເມວ, ຈຸດປະສົງໃນການນຳໃຊ້ບໍລິການ ແລະ ເອກະສານຕ່າງໆ ໃນການປະກອບເອກະສານ;

3. ຕ້ອງປະຕິບັດຕາມວັດຖຸປະສົງທີ່ໄດ້ຮັບອະນຸຍາດຕາມລະບຽບການຂອງຜູ້ໃຫ້ບໍລິການຝາກເວັບໄຊ ແລະ ບໍ່ຂັດຕໍ່ ກົດໝາຍ ແລະ ລະບຽບການ ທີ່ວາງອອກໃນແຕ່ລະໄລຍະ;

4. ຕ້ອງເກັບຮັກສາ ແລະ ນຳໃຊ້ລະຫັດຊື່ ພ້ອມທັງລະຫັດຜ່ານຂອງຕົນໃຫ້ປອດໄພ ແລະ ປິດລັບ;

5. ຕ້ອງເປັນຜູ້ຮັບຜິດຊອບທັງໝົດຕໍ່ຄວາມເສຍຫາຍອັນເກີດຈາກການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ຈ່າຍຄ່າທຳນຽມລະຫັດຊື່ອິນເຕີເນັດ ແລະ ຄ່າບໍລິການຝາກເວັບໄຊຕາມທີ່ໄດ້ກຳນົດໄວ້;

7. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການ**

ຫ້າມສຳລັບຜູ້ໃຫ້ບໍລິການຮັບຝາກເວັບໄຊພາກລັດມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອານຸຍາດ ເຊັ່ນ: ລະຫັດຊື່, ລະຫັດຜ່ານ ແລະ ອື່ນໆ;

2. ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ຫຼື ເຜີຍແຜ່ຂໍ້ມູນໃຫ້ກັບບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ມີການເຄື່ອນໄຫວຕໍ່ຕ້ານແນວທາງນະໂຍບາຍຂອງພັກ-ລັດ, ກົດໝາຍ ແລະ ລະບຽບການທີ່ກະທົບຕໍ່ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ;

3. ປັບປຸງ ແລະ ດັດແປງ ເນື້ອໃນເວັບໄຊຂອງຜູ້ໃຊ້ບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ;

4. ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງສ້າງເວັບໄຊ ເພື່ອເຜີຍແຜ່ຮູບພາບເໜັງຕີງ-ບໍ່ເໜັງຕີງ, ສຽງ ແລະ ວີດີໂອລາມົກອະນາຈານ ຫຼື ໃຫ້ບໍລິການຊື້ຂາຍທາງເພດ;

5. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 25 ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການ**

ຫ້າມສໍາລັບຜູ້ໃຊ້ບໍລິການມີ ພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ເວັບໄຊເປັນສື່ກາງໃນການໂຄສະນາຕໍ່ຕ້ານ, ຫຼອກລວງ ແລະ ຊວນເຊື່ອປະຊາຊົນທັງຢູ່ພາຍໃນ ແລະ ຕ່າງປະເທດ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງລະບອບການເມືອງ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດຖະກິດ, ສັງຄົມ, ວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

2. ເຜີຍແຜ່ຂໍ້ມູນທີ່ເປັນການຍຸຍົງ-ສົ່ງເສີມການເຄື່ອນໄຫວທີ່ບໍ່ດີຕ່າງໆ, ສ້າງຂ່າວອະກຸສົນ ທີ່ເປັນການໂຄສະນາບິດເບືອນ ແລະ ປ່າວຂ່າວ ເພື່ອແບ່ງແຍກຊົນຊັ້ນ ຫຼື ສ້າງຄວາມແຕກແຍກລະຫວ່າງຊົນຊາດຊົນເຜົ່າ;

3. ເຜີຍແຜ່ຄວາມລັບຂອງຊາດ, ທາງການທະຫານ ຫຼື ຄວາມລັບອື່ນ ທີ່ກໍານົດໄວ້ຢູ່ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

4. ເຜີຍແຜ່ຂໍ້ມູນແຕະຕ້ອງເຖິງຊັບສິນທາງປັນຍາຂອງຜູ້ອື່ນ, ບິດເບືອນຄວາມຈິງ ຫຼື ໃສ່ຮ້າຍປ້າຍສີ ເພື່ອສ້າງຄວາມເສື່ອມເສຍກຽດຕິຍົດ, ສັກສີ, ພາບພົດ ແລະ ຜົນປະໂຫຍດຕໍ່ບຸກຄົນ, ນິຕິບຸກຄົນ, ພາກສ່ວນ ຫຼື ອົງການຈັດຕັ້ງອື່ນ;

5. ນໍາໃຊ້ເວັບໄຊໃນການເຜີຍແຜ່ຮູບພາບຕັດຕໍ່, ວິດີໂອ, ນໍາສະເໜີ, ສິ່ງ ຫຼື ສິ່ງຕໍ່ ບັນດາຂໍ້ມູນຂ່າວສານຕ່າງໆ ທີ່ມີລັກສະນະລາມົກອະນາຈານ, ຊື້ຂາຍບໍລິການທາງເພດ ທີ່ຜິດຕໍ່ກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

6. ນໍາເອົາຂໍ້ມູນທີ່ຍັງບໍ່ທັນໄດ້ກວດສອບ ຫຼື ບໍ່ຮູ້ແຫຼ່ງທີ່ມາ ທີ່ອາດມີຜົນກະທົບຕໍ່ອົງການຈັດຕັ້ງໃດໜຶ່ງ ແລະ ສັງຄົມມາເຜີຍແຜ່ໃນເວັບໄຊຂອງຕົນ;

7. ໃຫ້ບໍລິການ ຫຼື ເຮັດທຸລະກໍາຕ່າງໆຜ່ານເວັບໄຊ ໂດຍບໍ່ໄດ້ຮັບອະນຸຍາດ;

8. ປະກອບຄໍາເຫັນທີ່ເປັນການສະໜັບສະໜູນ ຫຼື ທໍາລາຍບຸກຄົນ, ອົງການຈັດຕັ້ງ ແລະ ປະເທດຊາດ;

9. ມີພຶດຕິກໍາອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ອົງການຄຸ້ມຄອງ ແລະ ຕິດຕາມກວດກາ

**ມາດຕາ 26 ອົງການຄຸ້ມຄອງ ແລະ ຕິດຕາມກວດກາ**

ອົງການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານມາດຕະຖານເວັບໄຊຂອງພາກລັດ ປະກອບດ້ວຍ:

1. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ນະຄອນຫຼວງ.

**ມາດຕາ 27 ສິດ ແລະ ໜ້າທີ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານມາດຕະຖານເວັບໄຊຂອງພາກລັດ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຫຼັກການ, ລະບຽບການ ແລະ ມາດຕະຖານໃນການຄຸ້ມຄອງ, ຕິດຕາມ-ກວດກາການພັດທະນາເວັບໄຊຂອງພາກລັດ;

2. ຄົ້ນຄວ້າພັດທະນາລະບົບເວັບໄຊພາກລັດ (G-Web Platform) ທີ່ເປັນພື້ນຖານ ໃຫ້ພາກລັດສາມາດນໍາໃຊ້ໄດ້ສະດວກ, ປອດໄພ, ປະຢັດ ແລະ ເປັນເອກະພາບກັນ.

3. ໂຄສະນາ, ເຜີຍແຜ່ມາດຕະຖານ ແລະ ລະບົບເວັບໄຊຂອງພາກລັດ ໃນການຈັດຕັ້ງປະຕິບັດ;

4. ໃຫ້ຄຳແນະນຳ, ກວດກາ ແລະ ຕິດຕາມການພັດທະນາເວັບໄຊຂອງອົງການຈັດຕັ້ງພາກລັດ;

5. ປະສານສົມທົບ ແລະ ຮ່ວມມືກັບບັນດາອົງການຈັດຕັ້ງພາກລັດທາງດ້ານວິຊາການ ແລະ ເຕັກນິກໃນການຄົ້ນຄວ້າ ແລະ ພັດທະນາເວັບໄຊ.

6. ແຈ້ງເຕືອນອົງການຈັດຕັ້ງລັດທີ່ນຳໃຊ້ ແລະ ໃຫ້ບໍລິການຂໍ້ມູນຂ່າວສານຜ່ານເວັບໄຊ ທີ່ບໍ່ຖືກຕ້ອງ ແລະ ບໍ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ບໍ່ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ລະບຽບການຕ່າງໆ ກ່ຽວກັບພັດທະນາເວັບໄຊຂອງພາກລັດ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານມາດຕະຖານເວັບໄຊຂອງພາກລັດ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນການ ແລະ ຂໍ້ຕົກລົງ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ຽວກັບວຽກງານການພັດທະນາເວັບໄຊຂອງພາກລັດ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ມາດຕະຖານເວັບໄຊຂອງພາກລັດ ຢູ່ພາຍໃນທ້ອງຖິ່ນຂອງຕົນໃຫ້ທົ່ວເຖິງ;

3. ຊີ້ນຳຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ປະຈຳເມືອງ, ເທດສະບານກ່ຽວກັບວຽກງານການພັດທະນາເວັບໄຊຂອງພາກລັດ;

4. ໃຫ້ຄຳແນະນຳ, ກວດກາ ແລະ ຕິດຕາມການພັດທະນາເວັບໄຊຂອງອົງການຈັດຕັ້ງພາກລັດໃນຂອບເຂດທ້ອງຖິ່ນຂອງຕົນ;

5. ປະສານສົມທົບ ແລະ ຮ່ວມມືກັບອົງການປົກຄອງແຂວງ, ນະຄອນ ແລະ ເມືອງທາງດ້ານວິຊາການ ແລະ ເຕັກນິກໃນການຄົ້ນຄວ້າ ແລະ ພັດທະນາເວັບໄຊ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ອົງການຈັດຕັ້ງພາກລັດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຊຶ່ງນຳພາໃຫ້ເກີດການເສຍຫາຍ ຕໍ່ອົງການຈັດຕັ້ງພາກລັດ ແລະ ສັງຄົມຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 31 ການຈັດຕັ້ງປະຕິບັດ**

ມອບໃຫ້ ສູນບໍລິຫານລັດດ້ວຍເອເລັກໂຕຣນິກ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ນະຄອນຫຼວງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 32 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ